# ສູນກາງການຊ່ວຍເຫຼືອຮັກສາສຸຂພາບ ແລະສະວັດດີການສັງຄົມ
# ຂອງຣັຖບານອົງການ Medicare & Medicaid Services
## ປະກາດການສຶກສາຮຽນຮູ້ກ່ຽວກັບອົງການຊ່ວຍເຫຼືອຮັກສາສຸຂພາບ Medicare ແຫ່ງຊາດ
## ອົງການຊ່ວຍເຫຼືອຮັກສາສຸຂພາບ Medicare ຍິນດີຕ້ອນຮັບ
## ການເລີ້ມຕົ້ນເພື່ອໃຫ້ທ່ານມີສຸຂພາບແຂງແຮງໃນອະນາຄົດ

ຣະຍະເວລາບໍ່ດົນມານີ້ທ່ານໄດ້ໄປຈົດຊື່ນຳອົງການຊ່ວຍເຫຼືອຮັກສາສຸຂພາບ ແລະບໍ່ແນ່ໃຈວ່າຄວນຈະເຮັດແນວໃດໃນຂັ້ນຕໍ່ໄປແມ່ນບໍ່?

ນີ້ແມ່ນຄຳແນະນຳເບື້ອງຕົ້ນເພື່ອຊ່ວຍໃຫ້ທ່ານເຂົ້າໃຈກ່ຽວກັບການມີສຸຂພາບແຂງແຮງໃນອະນາຄົດ:

ຂັ້ນທີ 1: ໃຫ້ທ່ານໄປຈົດຊື່ນຳອົງການ "Welcome to Medicare". ເພື່ອປະກັນການກວດສຸຂພາບ.

ໃຫ້ໂທຣະສັບຫາທ່ານໝໍຂອງທ່ານເພື່ອກວດສຸຂພາບໃນວັນນີ້ນຳອົງການ "Welcome to Medicare". ນີ້ເປັນວິທີທີ່ງ່າຍເພື່ອໃຫ້ທ່ານໝໍຂອງທ່ານໄດ້ຮູ້ຈັກຢ່າງແນ່ນອນກ່ຽວກັບສຸຂພາບຂອງທ່ານໃນປັດຈຸບັນ ແລະອະນາຄົດ.

ເມື່ອເວລາກວດສຸຂພາບ ທ່ານ ແລະທ່ານໝໍຂອງທ່ານຕ້ອງທົບທວນປະວັດສຸຂພາບຂອງທ່ານ ແລະ ຄອບຄົວ, ເພື່ອປະເມີນສະພາບປັດຈຸບັນຂອງສຸຂພາບແລະໃບສັ່ງຢາຈາກແພດ ແລະທຳການກວດສຸຂພາບເບື້ອງຕົ້ນເພື່ອບັນທຶກການກວດໄວ້ສຳລັບການປິ່ນປົວຮັກສາຕົວທ່ານໂດຍສະເພາະໃນອະນາຄົດ..

ພ້ອມດຽວກັນນີ້ ທ່ານຍັງຈະໄດ້ມີໂອກາດໂອ້ລົມກ່ຽວກັບສຸຂພາບຂອງທ່ານໃນຣະຍະສັ້ນ ແລະໃນຣະຍະຍາວແຕ່ລະຂັ້ນເພື່ອປັບປຸງສຸຂພາບຂອງທ່ານໃຫ້ໄດ້ຢູ່ສະບາຍ ພາຍໃຕ້ການດູແລຮັກສາຈາກທ່ານໝໍ ຂອງອົງການຊ່ວຍເຫຼືອປະກັນຮັກສາສຸຂພາບ Medicare program. ຕົວຢ່າງ, ທ່ານໝໍຂອງທ່ານຈະວາງແຜນການປິ່ນປົວຮັກສາໃຫ້ທ່ານແຕ່ລະຂັ້ນຊຶ່ງຣວມທັງການສົ່ງໄປຫາຊ່ຽວຊານເພື່ອໃຫ້ໂອກາດແກ່ທ່ານໄດ້ຮັບການຊ່ວຍເຫຼືອໃນຂັ້ນຕໍ່ໄປຣວມທັງການປ້ອງກັນຮັກສາສຸຂພາບອື່ນໆ, ເຊັ່ນການກວດຊອກຫາເຊື້ອໂຣຄມະເຮັງ, ການສັກຢາປ້ອງກັນເຊື້ອໂຣຄ, ການສັກຢາແລະການກວດຊອກຫາເຊື້ອໂຣຄເບົາຫວານ-ຊຶ່ງການປິ່ນປົວບາງຢ່າງທີ່ມີໄວ້ໃຫ້ຜູ້ທີ່ຢູ່ໃນອົງການຊ່ວຍເຫຼືອ Medicare ໂດຍບໍ່ໄດ້ ເສັຍຄ່າແຕ່ຢ່າງໃດ ຊຶ່ງແມ່ນຜົນສະທ້ອນມາຈາກກົດຫມາຍ "the Affordable Care Act."

ເມື່ອເວລາການກວດສຸຂພາບສິ້ນສຸດລົງແລ້ວ, ຢ່າລືມນັດທ່ານໝໍໄວ້ເພື່ອກວດປະຈຳປີ "Wellness Exam" ໃນປີໜ້າຕໍ່ໄປ. ຂໍຂອບໃຈນຳກົດຫມາຍ the Affordable Care Act, ຊຶ່ງປັດຈຸບັນນີ້ ທາງອົງການຊ່ວຍເຫຼືອຮັກສາສຸຂພາບ Medicare ໄດ້ປະກັນການກວດສຸຂພາບປະຈຳປີໃຫ້.

ນີ້ແມ່ນວິທີທີ່ດີທີ່ສຸດເພື່ອປະເມີນການປ່ຽນແປງກ່ຽວກັບສຸຂພາບຂອງທ່ານເມື່ອເວລາມີອົງການ "Welcome to Medicare" ແລະອົງການກວດສຸຂພາບປະຈຳປີ "Wellness Exam" ປະກັນໃຫ້ ຊຶ່ງສາມາດເຮັດໃຫ້ກວດເຫັນບັນຫາຂອງສຸຂພາບເມື່ອເວລາເລີ້ມຕົ້ນ..

ຂັ້ນທີ່ 2: ໃຫ້ໄປຈົດຊື່ນຳເວບໄຊທ໌ຂອງຣັຖບານທີ່ MyMedicare.gov

ການຈົດຊື່ນຳເວບໄຊທ໌ທີ່ www.MyMedicare.gov ຈະຊ່ວຍໃຫ້ທ່ານເຂົ້າໄປຫາຂໍ້ມູນກ່ຽວກັບສຸຂພາບຂອງທ່ານໄດ້ຢ່າງສະດວກ. ການໃຊ້ທາງອອນລາຍເພື່ອເຂົ້າໄປເອົາລາຍຣະອຽດກ່ຽວກັບຜົນປະໂຢດທີ່ທ່ານຄວນຈະໄດ້ຮັບຈາກອົງການ Medicare ນີ້ແມ່ນບໍຣິການຟຣີໂດຍບໍ່ໄດ້ເສັຍຄ່າຫຍັງ.

ຖ້າທ່ານຫາກບໍ່ມີຄອມພິວເຕີ, ໃຫ້ຖາມຜູ່ທີ່ທ່ານໄວ້ໃຈໄດ້, ເຊັ່ນສະມາຊິກຄອບຄົວ ຫຼືຜູ້ບໍຣິຫານຂອງອົງການຊ່ວຍເຫຼືອຜູ້ອາວຸໂສໃນທ້ອງຖິ່ນຂອງທ່ານເປັນຜູ້ຈົດຊື່ໃຫ້ ແລະທົບທວນເບິ່ງເປັນປະຈຳ.

ຂັ້ນທີ່ 3. ໃຫ້ໝາຍເວລາຈົດຊື່ໃສ່ໃນປະຕິທິນຂອງທ່ານໄວ້ ການຈົດຊື່ແມ່ນຢູ່ໃນຣະຫວ່າງເດືອນສິບເອັດ ວັນທີ່ 15 ຫາເດືອນສິບສອງ ວັນທີ່ 31 ຂອງປີ 2010.

ເຖິງວ່າທ່ານໄດ້ຈົດຊື່ນຳອົງການ Medicare ໃນຣະຍະບໍ່ດົນມານີ້ແລ້ວກໍ່ຕາມ, ເພື່ອຄວາມແນ່ນອນ ທ່ານຈະຕ້ອງກວດເບິ່ງຜົນປະໂຢດທີ່ທ່ານຄວນໄດ້ຮັບຈາກໃບປະກັນສຸຂພາບ ຫຼືໃບສັ່ງຢາຈາກແພດວ່າມີຄວາມພຽງພໍກັບຄວາມຕອ້ງການຂອງທ່ານແລ້ວບໍ່. ທ່ານອາດຕ້ອງການຈົດຊື່ເພື່ອປະກັນເຂົ້ານຳອົງການ Medicare Drug Plan (Part D) ຖ້າທ່ານຫາກຍັງບໍ່ທັນໄດ້ຈົດເທື່ອ. ໃຫ້ທ່ານໃຊ້ຄວາມຮູ້ທີ່ທ່ານໄດ້ຮຽນ ຈາກປຶ້ມຄູ່ມື "Welcome to Medicare" ເພື່ອຊ່ວຍໃຫ້ທ່ານໄດ້ເລືອກການປະກັນກວດສຸຂພາບຂອງທ່ານ.

ຣະຍະເວລາເປີດການຈົດຊື່ມີພຽງປີລະຄັ້ງເທົ່ານັ້ນ, ດັ່ງນັ້ນທ່ານຕ້ອງກວດເບິ່ງແລ້ວເລືອກເອົາແຜນການທີ່ເໝາະສົມກັບທ່ານພາຍໃນເດືອນສິບເອັດ ວັນທີ່ 15 ຫາເດືອນສິບສອງ ວັນທີ່ 31 ຂອງປີ 2010. ອົງການ Medicare's popular Plan Finder ອຸບປະກອນເພື່ອຊອກຫາແຜນການ ປະກັນຮັກສາ ສຸຂພາບໃຫ້ເຂົ້າໄປຫາເວບໄຊທ໌ຂອງຣັຖບານທີ່ (www.medicare.gov) ແລະຜູ້ໃຫ້ຄຳປຶກສາຂອງອົງການ ຊ່ວຍເຫຼືອ State's Senior Health Insurance Assistance Program (www.shiptalk.org) ໃນເຂດທອ້ງຖິ່ນຂອງທ່ານເພື່ອໃຫ້ການຊ່ວຍເຫຼືອກ່ຽວກັບການຕັດສິນເລືອກເອົາແຜນການເມື່ອເວລາໄປຈົດຊື່.

ຂັ້ນທີ່ 4: ໃຫ້ຮັບເອົາການຊ່ວຍເຫຼືອທຸກຢ່າງທີ່ທາງອົງການ Medicare ມີໄວ້ໃຫ້.

ການຊ່ວຍເຫຼືອຈາກອົງການ Medicare ມີຫຼາຍຢ່າງທີ່ໃຫ້ຜົນປະໂຍດແກ່ທ່ານ. ໃຫ້ກວດເບິ່ງນຳອົງການ "New to Medicare? ຊຶ່ງຢູ່ໃນເວບໄຊທ໌ຂອງຣັຖບານ www.medicare.gov ຂໍ້ມູນຂອງຜູ້ທີ່ຈົດຊື່ເຂົ້າໃໝ່, ໃຫ້ກວດເບິ່ງປຶ້ມຄູ່ມືຂອງ "Medicare & You 2011", ຫຼືໂທຣະສັບຫາ 1-800-MEDICARE (1-800-633-4227). ທ່ານທີ່ໃຊ້ຣະບົບ TTY ໃຫ້ໂທ 1-877-486-2048 ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອດ້ານພາສານອກຈາກພາສາອັງກິສ ຫຼືພາສາສະເປນິສ ໃຫ້ເວົ້າວ່າ "Agent" ໄດ້ທຸກເວລາ ເພື່ອໂອ້ລົມກັບຜູ້ຕາງໜ້າທີ່ຈະໃຫ້ການຊ່ວຍເຫຼືອແກ່ທ່ານ. ຕ້ອງການລາຍຣະອຽດເພີ້ມຕື່ມໃຫ້ເຂົ້າໄປທີ່ www.healthcare.gov.